# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ສໍານັກງານນາຍົກລັດຖະມົນຕີ** ເລກທີ 148 /ນຍ

*ນະຄອນຫລວງວຽງຈັນ, ວັນທີ 29 ກັນຍາ 2003*

## ດໍາລັດ

### ຂອງນາຍົກລັດຖະມົນຕີ

### ວ່າດ້ວຍເຂດເສດຖະກິດພິເສດ ສະຫວັນ-ເຊໂນ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມ ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນພາຍໃນເລກທີ 03/95/ສພຊ, ລົງວັນທີ 14 ຕຸລາ 1995.
- ອີງຕາມ ກົດໝາຍ ວ່າດ້ວຍການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນຕ່າງປະເທດ ຢູ່ ສປປ ລາວ ເລກທີ 01/94, ລົງວັນທີ 14 ມີນາ 1994.
- ອີງຕາມ ການສະເໜີຂອງປະທານຄະນະຄຸ້ມຄອງການລົງທຶນຮ່ວມມືກັບຕ່າງປະເທດ ແລະ ລົງທຶນພາຍໃນ.

### ນາຍົກລັດຖະມົນຕີອອກດໍາລັດ

**ມາດຕາ 1. ຈຸດປະສົງ.**

ດໍາລັດສະບັບນີ້ກໍານົດກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ແລະ ນະໂຍບາຍພື້ນຖານຂອງເຂດເສດຖະກິດພິເສດສະຫວັນ-ເຊໂນ, ແນໃສ່ນໍາໃຊ້ທ່າແຮງຂອງເຂດດັ່ງກ່າວໃນການດຶງດູດ ແລະ ສົ່ງເສີມການລົງທຶນຈາກຕ່າງປະເທດ ແລະ ລົງທຶນພາຍໃນຕາມນະໂຍບາຍການລົງທຶນຂອງລັດຖະບານ; ເພື່ອເພີ່ມການຜະລິດ, ການສົ່ງອອກສິນຄ້າ ແລະ ການບໍລິການ, ສ້າງໂອກາດໃຫ້ແກ່ ການຮຽນຮູ້ບົດຮຽນດ້ານການຄຸ້ມຄອງ-ບໍລິຫານທຸລະກິດ ແລະ ນໍາໃຊ້ເຕັກໂນໂລຊີໃໝ່, ສົ່ງເສີມການພົວພັນອຸດສາຫະກໍາ, ການຄ້າ ແລະ ການບໍລິການກັບສາກົນ ແລະ ພາກພື້ນ.

**ມາດຕາ 2. ຄໍານິຍາມ**

ເຂດເສດຖະກິດພິເສດ ສະຫວັນ-ເຊໂນ ມີຊື່ຫຍໍ້ວ່າ " ຂສສຊ " ມີເນື້ອທີ່ເບື້ອງຕົ້ນ 305 ເຮັກຕາຢູ່ຈຸດ A ແລະ 20 ເຮັກຕາຢູ່ຈຸດ B ຕາມແຜນວາດ 6.5 ຂອງແຜນແມ່ບົດ ກ່ຽວກັບ

ເຂດເສດຖະກິດພິເສດ, ຊຶ່ງແມ່ນພື້ນທີ່ທີ່ລັດຈັດສັນໃຫ້ນັກລົງທຶນພາຍໃນ ແລະ ຕ່າງປະເທດ ເພື່ອລົງທຶນກໍ່ສ້າງພື້ນຖານໂຄງລ່າງ ແລະດຳເນີນທຸລະກິດການຜະລິດອຸດສາຫະກຳ, ການຄ້າ ແລະ ການບໍລິການ. ທຸກການເຄື່ອນໄຫວຢູ່ໃນເຂດດັ່ງກ່າວ ແມ່ນໄດ້ຮັບການສົ່ງເສີມ ແລະ ຄຸ້ມຄອງດ້ວຍກົດໝາຍ, ດ້ວຍນະໂຍບາຍພິເສດສະເພາະ; ເປັນບ່ອນຕ້ອນຮັບນັກລົງທຶນພາຍໃນ ແລະ ຕ່າງປະເທດ, ຮັບເອົາເຕັກໂນໂລຊີທີ່ທັນສະໄໝ ແນໃສ່ສ້າງໃຫ້ເປັນສູນກາງແຫ່ງ ການຮ່ວມມືທາງດ້ານເສດຖະກິດ, ອຸດສາຫະກຳ, ການຄ້າ ແລະ ການບໍລິການແຫ່ງໜຶ່ງຂອງພາກພື້ນ.

**ມາດຕາ 3. ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະບໍລິຫານເຂດເສດຖະກິດພິເສດ ສະຫວັນ-ເຊໂນແມ່ນການຈັດຕັ້ງໜຶ່ງຂອງລັດທີ່ຂຶ້ນໂດຍກົງກັບລັດຖະບານ ໂດຍມີສຳນັກງານນາຍົກລັດຖະມົນຕີເປັນຜູ້ຊ່ວຍລັດຖະບານຊີ້ນຳ. ມີພາລະບົດບາດຄົ້ນຄວ້າ, ພິຈາລະນາອະນຸມັດ, ຄຸ້ມຄອງ ແລະ ສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດຢູ່ພາຍໃນຂອບເຂດເນື້ອທີ່ດິນທີ່ລັດຖະບານມອບໃຫ້.

**ມາດຕາ 4. ໜ້າທີ່ ແລະ ຂອບເຂດສິດ**

ຄະນະບໍລິຫານເຂດເສດຖະກິດພິເສດ ສະຫວັນ-ເຊໂນ ມີໜ້າທີ່ ແລະ ຂອບເຂດສິດດັ່ງນີ້:

4.1 ຄົ້ນຄວ້າ ຫັນນະໂຍບາຍຂອງລັດຖະບານດ້ານວຽກງານການລົງທຶນມາເປັນແຜນຍຸດທະສາດໄລຍະຍາວ, ໄລຍະກາງ ແລະ ໄລຍະສັ້ນຂອງເຂດ, ພ້ອມກັນນັ້ນກໍ່ຈັດຕັ້ງປະຕິບັດບັນດາແຜນການດັ່ງກ່າວໃຫ້ໄດ້ຮັບຜົນດີ;

4.2 ຄົ້ນຄວ້າ ຮ່າງລະບຽບການຄຸ້ມຄອງ, ການສົ່ງເສີມ ແລະ ການພັດທະນາເຂດ ເພື່ອສະເໜີນາຍົກລັດຖະມົນຕີອະນຸມັດປະກາດໃຊ້; ແນະນຳ, ກວດກາບັນດາຫົວໜ່ວຍການຈັດຕັ້ງ ຫລື ວິສາຫະກິດຕ່າງໆຢູ່ພາຍໃນເຂດ ໃນການຈັດຕັ້ງປະຕິບັດກົດໝາຍການລົງທຶນ, ກົດໝາຍອື່ນໆທີ່ກ່ຽວຂ້ອງ ແລະ ລະບຽບການຂອງເຂດ;

4.3 ສະໜອງຂໍ້ມູນຂ່າວສານ ແລະ ໃຫ້ຄວາມສະດວກໃນດ້ານຕ່າງໆແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດທີ່ສົນໃຈຢາກມາລົງທຶນຢູ່ພາຍໃນເຂດ, ພິຈາລະນາອະນຸມັດການລົງທຶນຢ່າງກະທັດຮັດ, ວ່ອງໄວ ແລະ ຄຸ້ມຄອງການລົງທຶນຢ່າງມີປະສິດທິຜົນສູງ;

4.4 ຊຸກຍູ້, ສົ່ງເສີມໃຫ້ບັນດາຫົວໜ່ວຍທຸລະກິດຢູ່ໃນເຂດມີການເຕີບໃຫຍ່ຂະຫຍາຍຕົວ ພ້ອມທັງປະຕິບັດພັນທະໃຫ້ລັດຄົບຖ້ວນ ແລະ ທັນເວລາ;

4.5 ໂຄສະນາ, ປຸກລະດົມຂົນຂວາຍນັກທຸລະກິດ, ນັກລົງທຶນພາຍໃນ ແລະ ຕ່າງປະເທດເຂົ້າມາລົງທຶນ, ດຳເນີນທຸລະກິດປະເພດຕ່າງໆຢູ່ພາຍໃນເຂດ; ຮ່ວມທຶນກັບເອກະຊົນ ຫລື ລົງທຶນດ້ວຍຕົນເອງ ເພື່ອກໍ່ສ້າງພື້ນຖານໂຄງລ່າງປະເພດຕ່າງໆ; ເຊັນສັນຍາ, ອະນຸມັດໃຫ້ເຊົ່າຕຶກອາຄານ, ສຳນັກງານ ແລະ ຊັບສິນບັດຕ່າງໆ ທີ່ເປັນກຳມະສິດຂອງລັດຢູ່ພາຍໃນເຂດ;

4.6 ພົວພັນປະສານງານຢ່າງເປັນປະຈຳກັບບັນດາກະຊວງ, ຂະແໜງການທີ່ກ່ຽວຂ້ອງ ເພື່ອປຶກສາຫາລືແກ້ໄຂບັນຫາຄວາມຫຍຸ້ງຍາກ, ຂໍ້ຈຳກັດຕ່າງໆກ່ຽວກັບການລົງທຶນພົວພັນເຖິງຂົງເຂດ ຫລື ຂະແໜງການທີ່ກະຊວງ, ອົງການດັ່ງກ່າວຄຸ້ມຄອງ; ພົວພັນປະສານງານກັບອົງການປົກຄອງ ແຂວງສະຫວັນນະເຂດ ໃນດ້ານວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ການພັດທະນາທ້ອງຖິ່ນ; ພົວພັນຂໍຄຳເຫັນຊີ້ນຳຈາກນາຍົກລັດຖະມົນຕີ ຫລື ຜູ້ທີ່ໄດ້ຮັບມອບໝາຍ ກ່ຽວກັບບັນຫາທີ່ພົວພັນເຖິງຫລັກການ, ນະໂຍບາຍ ຫລື ລະບຽບການ ທີ່ລັດຖະບານຍັງບໍ່ທັນໄດ້ກຳນົດ ຫລື ໄດ້ກຳນົດແຕ່ບໍ່ທັນລະອຽດຈະແຈ້ງ;

4.7 ຄົ້ນຄວ້າ ອະນຸມັດການລົງທຶນພາຍໃນ ແລະ ຕ່າງປະເທດ, ອອກໃບອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດ (ການຜະລິດອຸດສາຫະກຳ, ການຄ້າ, ການບໍລິການ ແລະ ການທ່ອງທ່ຽວ); ເຈລະຈາ, ເຊັນສັນຍາໃຫ້ສຳປະທານ ຫລື ເຊັນບົດບັນທຶກຄວາມເຂົ້າໃຈ; ອອກໃບອະນຸຍາດ ຂະຫຍາຍ ຫລື ອະນຸຍາດຕໍ່ອາຍຸດຳເນີນກິດຈະການຕ່າງໆຂອງຜູ້ມາລົງທຶນຢູ່ ຂສສຊ ຕາມ ຂອບເຂດສິດທີ່ໄດ້ກຳນົດ;

4.8 ຄົ້ນຄວ້າ, ນຳສະເໜີພາກສ່ວນກ່ຽວຂ້ອງ ແລະ ຂັ້ນເທິງພິຈາລະນາກ່ຽວກັບການເວນຄືນທີ່ດິນ, ການຍົກຍ້າຍ ແລະ ການຈັດສັນທີ່ຢູ່ອາໃສໃຫ້ປະຊາຊົນ ທີ່ຖືກຍົກຍ້າຍອອກຈາກພື້ນທີ່ ຂອງ ຂສສຊ ດ້ວຍທຶນຂອງລັດ ແລະ ທຶນຂອງ ຂສສຊ ທີ່ລະດົມມາໄດ້;

4.9 ຄຸ້ມຄອງການຈັດຕັ້ງ ແລະພະນັກງານທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ; ສະເໜີຂັ້ນເທິງພິຈາລະນາຕົກລົງກ່ຽວກັບການສ້າງຕັ້ງ, ຍຸບເລີກກົງຈັກການຈັດຕັ້ງຂອງເຂດ, ການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງຮອງຜູ້ອຳນວຍການເຂດ, ຫົວໜ້າຫ້ອງການ ແລະ ຕຳແໜ່ງອື່ນໆໃນ ຂສສຊ ຕາມລະບຽບການກຳນົດ;

4.10 ຄຸ້ມຄອງ, ນຳໃຊ້ຊັບສິນບັດໃຫ້ມີປະສິດທິຜົນ ແລະຖືກຕ້ອງຕາມລະບຽບຫລັກການຂອງລັດ;

4.11 ຄຸ້ມຄອງ, ນຳໃຊ້ງົບປະມານຢ່າງປະຢັດ, ມີປະສິດທິຜົນສູງ; ຄົ້ນຄວ້າຊອກແຫລ່ງລາຍຮັບອື່ນໆ ເພື່ອນຳມາພັດທະນາເຂດ;

4.12 ອອກຂໍ້ຕົກລົງ, ແຈ້ງການ ແລະ ບົດແນະນຳຕ່າງໆ ເພື່ອຜັນຂະຫຍາຍປະຕິບັດກົດໝາຍ, ຂໍ້ຕົກລົງ, ບົດແນະນຳຂອງຂັ້ນເທິງ ແລະ ເພື່ອບໍລິຫານຄຸ້ມຄອງການເຄື່ອນໄຫວວຽກງານພາຍໃນເຂດ;

4.13 ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ແກ່ພະນັກງານ, ກຳມະກອນລາວຢູ່ພາຍໃນເຂດໄດ້ຮຽນຮູ້ກ່ຽວກັບບົດຮຽນ, ປະສົບການໃນການບໍລິຫານທຸລະກິດ, ການນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າທັນສະໄໝຂອງຕ່າງປະເທດ, ປະກອບສ່ວນເຂົ້າໃນການຫັນເປັນອຸດສາຫະກຳ ແລະ ຫັນເປັນທັນສະໄໝ; ສ້າງເງື່ອນໄຂໃຫ້ປະຊາຊົນລາວຢູ່ທ້ອງຖິ່ນມີວຽກເຮັດງານທຳ, ແກ້ໄຂຄວາມທຸກຍາກ;

4.14 ສະຫລຸບລາຍງານການເຄື່ອນໄຫວວຽກງານຂອງເຂດ ປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີໃຫ້ລັດຖະບານ, ນາຍົກລັດຖະມົນຕີ ແລະ ແຂວງທີ່ກ່ຽວຂ້ອງຊາບເປັນປົກກະຕິ;

4.15 ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 5. ໂຄງປະກອບການຈັດຕັ້ງ**

5.1 ກົງຈັກການຈັດຕັ້ງຂອງເຂດເສດຖະກິດພິເສດ ສະຫວັນ-ເຊໂນ ປະກອບດ້ວຍຫ້ອງການບໍລິຫານ, ພະແນກ, ກອງວິຊາການ ແລະ ໜ່ວຍງານຕ່າງໆ ເພື່ອຊ່ວຍວຽກຢູ່ພາຍໃນເຂດ.

ນາຍົກລັດຖະມົນຕີ ຫລື ຜູ້ທີ່ໄດ້ຮັບມອບໝາຍເປັນຜູ້ຕົກລົງສ້າງຕັ້ງ ຫລື ຍຸບເລີກກົງຈັກການຈັດຕັ້ງດັ່ງກ່າວ ຕາມການສະເໜີຂອງຜູ້ອຳນວຍການເຂດ.

ມອບໃຫ້ຜູ້ອຳນວຍການເຂດເປັນຜູ້ກຳນົດລະອຽດໜ້າທີ່, ຂອບເຂດສິດຂອງກົງຈັກດັ່ງກ່າວນີ້ ບົນພື້ນຖານການປະສານສົມທົບກັບສຳນັກງານນາຍົກລັດຖະມົນຕີ.

5.2 ຄະນະບໍລິຫານເຂດເສດຖະກິດພິເສດ ສະຫວັນ-ເຊໂນ ປະກອບມີຜູ້ອຳນວຍການເຂດ 1 ທ່ານ ຊຶ່ງໄດ້ຮັບການແຕ່ງຕັ້ງ ແລະປົດຕຳແໜ່ງໂດຍນາຍົກລັດຖະມົນຕີ; ມີຮອງຜູ້ອຳນວຍການຈຳນວນໜຶ່ງເຊິ່ງໄດ້ຮັບການແຕ່ງຕັ້ງ ຫລື ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ ຫລື ຜູ້ທີ່ໄດ້ຮັບມອບໝາຍຈາກນາຍົກລັດຖະມົນຕີ.

ຂັ້ນຕຳແໜ່ງຂອງຜູ້ເປັນຜູ້ວ່າການ ຫລື ຮອງຜູ້ວ່າການເຂດຈະຖືກກຳນົດຢູ່ໃນດຳລັດ ຫລື ຂໍ້ຕົກລົງແຕ່ງຕັ້ງໃນແຕ່ລະຄັ້ງ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ ແລະຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ.

## ມາດຕາ 6. ນະໂຍບາຍພື້ນຖານຕໍ່ການລົງທຶນຢູ່ ຂສສຊ

6.1 ລັດຖະບານສົ່ງເສີມໃຫ້ບັນດາບໍລິສັດຂອງລັດ, ເອກະຊົນທັງພາຍໃນ ແລະ ຕ່າງປະເທດ ລົງທຶນ ພັດທະນາບໍລິຫານໂຄງລ່າງ ແລະ ສົ່ງອຳນວຍຄວາມສະດວກໃນເຂດດັ່ງກ່າວ.

6.2 ການລົງທຶນພັດທະນາ ຂສສຊ ສາມາດດຳເນີນດ້ວຍຮູບການໃດໜຶ່ງທີ່ເໝາະສົມເຊັ່ນ: ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ 100%, ການລົງທຶນແບບທຸລະກິດປະສົມລະຫວ່າງ ພາຍໃນ ແລະຕ່າງປະເທດ, ການລົງທຶນຂອງລັດວິສາຫະກິດ, ການລົງທຶນຂອງລັດຮ່ວມກັບເອກະຊົນພາຍໃນ ແລະ ຕ່າງປະເທດ.

6.3 ຂະແໜງເສດຖະກິດທີ່ລັດສົ່ງເສີມໃນ ຂສສຊ ມີດັ່ງນີ້:

- ອຸດສາຫະກຳຜະລິດ ແລະ ປຸງແຕ່ງ ເພື່ອສົ່ງອອກ.
- ການຄ້າປອດພາສີ.
- ການບໍລິການປອດພາສີ.

6.4 ນັກລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນໃນ ຂສສຊ ຈະໄດ້ຮັບສິດທິພິເສດດ້ານພາສີ, ອາກອນ, ການເຂົ້າອອກເມືອງ, ການເຊົ່າທີ່ດິນ ແລະ ນະໂຍບາຍອື່ນໆ. ສິດທິພິເສດ ແລະ ນະໂຍບາຍດັ່ງກ່າວນັ້ນຈະໄດ້ກຳນົດໄວ້ຕ່າງຫາກ.

6.5 ທີ່ດິນ ແລະ ການຈັດສັນທີ່ດິນໃນ ຂສສຊ ມີດັ່ງນີ້:

6.5.1 ເນື້ອທີ່ດິນທີ່ຢູ່ໃນສິດຄອບຄອງ, ນຳໃຊ້ຂອງບຸກຄົນ ຫລື ການຈັດຕັ້ງຕ່າງໆມາກ່ອນແລ້ວນັ້ນ, ຈະໄດ້ຖືກຈັດສັນຄືນໃໝ່ໃຫ້ສອດຄ່ອງກັບແຜນພັດທະນາຂອງ ຂສສຊ ການເວນຄືນທີ່ດິນ ຫລື ການແກ້ໄຂບັນຫາທີ່ດິນຢູ່ພາຍໃນເຂດແມ່ນອີງຕາມກົດໝາຍ ວ່າດ້ວຍທີ່ດິນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງກຳນົດ.

6.5.2 ບັນດາໂຮງງານ ແລະ ບໍລິສັດຕ່າງໆທີ່ຕັ້ງຢູ່ ຂສສຊ ກ່ອນການສ້າງຕັ້ງ ຂສສຊ ນີ້ສາມາດນຳໃຊ້ນະໂຍບາຍຂອງເຂດໄດ້ ບົນພື້ນຖານການປັບປຸງຕົນເອງໃຫ້ສອດຄ່ອງກັບເງື່ອນໄຂ, ມາດຕະຖານ ແລະ ຫລັກການພັດທະນາເຂດທີ່ຄະນະບໍລິຫານ ຂສສຊ ກຳນົດ.

6.5.3 ເນື້ອທີ່ດິນຂອງ ຂສສຊ ເປັນກຳມະສິດແຫ່ງຊາດ. ບຸກຄົນ, ນິຕິບຸກຄົນ ແລະ ນັກລົງທຶນຕ່າງປະເທດ ແລະ ພາຍໃນມີສິດເຊົ່າ, ນຳໃຊ້, ສືບທອດ ແລະໂອນຕາມກົດໝາຍ ແລະ ລະບຽບການພິເສດ.

## ມາດຕາ 7. ໜ້າທີ່ຂອງອົງການປົກຄອງທ້ອງຖິ່ນ

ອົງການປົກຄອງທຸກຂັ້ນຂອງແຂວງສະຫວັນນະເຂດ, ເມືອງຄັນທະບູລີ, ເມືອງອຸທຸມພອນ ແລະ ເມືອງອື່ນໆທີ່ກ່ຽວຂ້ອງ ລວມທັງອຳນາດການປົກຄອງບ້ານ ແລະ ປະຊາຊົນໃນເຂດດັ່ງກ່າວມີໜ້າທີ່ດັ່ງນີ້:

7.1 ອຳນວຍຄວາມສະດວກ, ໃຫ້ການຮ່ວມມື ແລະ ໃຫ້ການຊ່ວຍເຫລືອແກ່ຄະນະບໍລິຫານເຂດໃນການແກ້ໄຂບັນຫາທີ່ດິນ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບຢູ່ພາຍໃນຂສສຊ.

7.2 ສົມທົບກັບຄະນະບໍລິຫານເຂດຄົ້ນຄວ້າ ຊອກຫາແຫລ່ງແຮງງານ ເພື່ອສະໜອງໃຫ້ແກ່ການເຄື່ອນໄຫວຕ່າງໆຢູ່ພາຍໃນ ຂສສຊ.

7.3 ປະກອບສ່ວນໂຄສະນາ, ປຸກລະດົມ, ຊຸກຍູ້ຂອງນັກທຸລະກິດ, ນັກລົງທຶນພາຍໃນ ແລະ ຕ່າງປະເທດເຂົ້າມາລົງທຶນ, ດຳເນີນທຸລະກິດປະເພດຕ່າງໆຢູ່ພາຍໃນເຂດ.

7.4 ປະຕິບັດໜ້າທີ່ອື່ນໆອີກທີ່ມີສ່ວນກ່ຽວພັນກັບ ຂສສຊ.

**ມາດຕາ 8. ງົບປະມານ**

8.1 ຂສສຊ ແມ່ນຫົວໜ່ວຍງົບປະມານຂັ້ນ I ( ຂັ້ນໜຶ່ງ ), ຄະນະບໍລິຫານ ຂສສຊ ມີໜ້າທີ່ຂຶ້ນແຜນງົບປະມານປະຈຳປີ ແລະ ນຳໃຊ້ງົບປະມານຢ່າງຖືກຕ້ອງຕາມລະບຽບຫລັກການການເງິນ ແລະ ຕາມຈຳນວນທີ່ໄດ້ຮັບອະນຸມັດຈາກລັດຖະບານ;

8.2 ໃຫ້ມີການກວດສອບບັນຊີ ກ່ຽວກັບການໃຊ້ຈ່າຍງົບປະມານຕາມລະບຽບຂອງກະຊວງການເງິນ ແລະ ມອບໃຫ້ກະຊວງການເງິນກຳນົດລະບຽບການທີ່ເໝາະສົມ ເພື່ອໃຫ້ຄະນະບໍລິຫານ ຂສສຊ ເຄື່ອນໄຫວໄດ້ຢ່າງຄ່ອງຕົວ ທັງຮັບປະກັນການຄຸ້ມຄອງການເງິນ-ງົບປະມານເຂັ້ມງວດຕາມກົດໝາຍກຳນົດ.

**ມາດຕາ 9. ລະບອບແບບແຜນວິທີເຮັດວຽກ**

ຄະນະບໍລິຫານເຂດເສດຖະກິດພິເສດ ສະຫວັນ-ເຊໂນເຮັດວຽກຕາມຫລັກການດັ່ງນີ້:

9.1 ເຄື່ອນໄຫວບົນພື້ນຖານແນວທາງນະໂຍບາຍ, ລະບຽບກົດໝາຍຂອງລັດຖະບານ ແລະ ລະບຽບການສະເພາະທີ່ຄະນະບໍລິຫານເຂດວາງອອກ.

9.2 ເຮັດວຽກຕາມຫລັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ສົມທົບກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ.

9.3 ເຄື່ອນໄຫວວຽກງານຢ່າງມີແຜນການ, ມີກຳນົດເວລາ, ມີຫລັກການ, ປະສານສົມທົບ ແລະ ກວດກາ ກວດການໂດຍອີງໃສ່ລະບຽບກົດໝາຍ, ລະບຽບການສະເພາະຂອງເຂດ.

9.4 ປະຕິບັດລະບອບລາຍງານ, ຂໍຄຳເຫັນຊີ້ນຳຈາກນາຍົກລັດຖະມົນຕີ ຫລື ຜູ້ທີ່ໄດ້ຮັບມອບໝາຍ ແລະ ທ່ານເຈົ້າແຂວງ ແຂວງສະຫວັນນະເຂດ; ດຳເນີນການປະຊຸມ, ສະຫລຸບຕີລາຄາ, ຖອດຖອນບົດຮຽນ ແລະ ສ່ອງແສງໃຫ້ຂັ້ນເທິງຂອງຕົນຊາບເປັນປົກກະຕິ.

**ມາດຕາ 10. ຕາປະທັບ**

ເຂດເສດຖະກິດພິເສດ ສະຫວັນ-ເຊໂນມີຕາປະທັບເປັນຂອງຕົນ ເພື່ອໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 11. ການຮັບຮູ້ ແລະ ປະຕິບັດ**

ສຳນັກງານນາຍົກລັດຖະມົນຕີ, ຄະນະບໍລິຫານ ຂສສຊ, ບັນດາກະຊວງ, ອົງການຢູ່ສູນກາງ ແລະ ອົງການປົກຄອງທ້ອງຖິ່ນຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 11. ຜົນສັກສິດ**

ດຳລັດສະບັບນີ້ ປ່ຽນແທນດຳລັດສະບັບເລກທີ02/ນຍ, ລົງວັນທີ 21 ມັງກອນ 2002 ວ່າດ້ວຍ ເຂດເສດຖະກິດພິເສດສະຫັວນ-ເຊໂນ ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**